ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0911 /ທລຍ
14 OCT 2015

# ບົດສະຫຼຸບປະຈຳເດືອນ ກັນຍາ
# ແລະ ແຜນວຽກ ເດືອນ ຕຸລາ 2015

ບົດລາຍງານສະບັບນີ້ ແມ່ນການສັງລວມຜົນຂອງການຈັດຕັ້ງປະຕິບັດວຽກງານ ທລຍ ໃນເດືອນ ກັນຍາ 2015 ທີ່ຜ່ານມາ ເຊິ່ງວຽກງານທີ່ພົ້ນເດັ່ນແມ່ນໄດ້ມີ:

ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບຄວາມເປັນໄປໄດ້ໃນການສືບຕໍ່ ທລຍ ໄລຍະທີ 3 ເຊິ່ງມີຜູ້ເຂົ້າຮ່ວມຈາກຕາງໜ້າຂອງອົງການຜູ້ໃຫ້ທຶນ ເປັນຕົ້ນແມ່ນຈາກທະນະຄານໂລກ ລວມທັງຊ່ຽວຊານຕ່າງປະເທດ ແລະ ຄະນະບໍລິຫານໂຄງການ ທລຍ ຂັ້ນສູນກາງ. ຫົວຂໍ້ທີ່ໄດ້ປຶກສາຫາລືສ່ວນໃຫຍ່ແມ່ນກ່ຽວກັບປະສົບການຈາກວຽກງານ ທລຍ ໄລຍະທີ 2 ເປັນຕົ້ນຜົນໄດ້ຮັບ, ບົດຮຽນ ແລະ ສິ່ງທ້າທາຍຕ່າງໆ ຫລັງຈາກນັ້ນແມ່ນໄດ້ປຶກສາຫາລືກ່ຽວກັບຄວາມເປັນໄປໄດ້ຂອງການສືບຕໍ່ເປັນ ທລຍ 3 ເປັນຕົ້ນແມ່ນຂອບເຂດຂອງວຽກງານ, ລວມທັງກິດຈະກຳທີ່ຄາດວ່າຈະໄດ້ເອົາໃຈໃສ່, ການເຊື່ອມໂຍງລະຫວ່າງລະຫວ່າງແຜນພັດທະນາຂອງລັດຖະບານ ແລະ ທລຍ, ຂອດການປະສານງານລະຫວ່າງ ທລຍ ແລະ ອຳນາດການປົກຄອງຕ່າງໆ ຂັ້ນສູນກາງ, ແຂວງ ແລະ ເມືອງ ແລະ ຫົວຂໍ້ອື່ນໆ.

ນອກຈາກນີ້, ຄະນະຮັບຜິດຊອບຈາກຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ, ກອງທຶນຫລຸດຜ່ອນຄວາມທຸກກຍາກ ແລະ ຈາກສະຖາບັນການພັດທະນາເພື່ອການຮຽນຮູ້ ປະເທດອົດສະຕາລີ ໄດ້ລົງເຄື່ອນໄຫວສຶກສາຄົ້ນຄວ້າເພື່ອປະກອບສ່ວນຊຸກຍູ້ວຽກງານ 3 ສ້າງ ຢູ່ແຂວງ ຫຼວງນ້ຳທາ ໃນລະຫວ່າງວັນທີ 14-18 ກັນຍາ 2015 ເຊິ່ງຈຸດປະສົງໃນການສຶກສາຄັ້ງນີ້ແມ່ນເພື່ອແລກປ່ຽນບົດຮຽນ ກ່ຽວກັບວຽກງານ 3 ສ້າງ ໂດຍທີມງານສຶກສາໄດ້ປະຊຸມກັບພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ເພື່ອນຳເອົາຜົນຂອງການສຶກສາຄົ້ນຄ້ວາເຂົ້າໃນການອອກແບບ ໂຄງການ ທລຍ 3 ເພື່ອເຮັດໃຫ້ ທລຍ 3 ປະກອບສ່ວນໃນການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານເຮົາ ໃນການແກ້ໄຂຄວາມທຸກຍາກ ກໍຄືຊຸກຍູ້ວຽກງານສາມສ້າງ ໃຫ້ໄດ້ຮັບຜົນດີທີ່ສຸດ. ສຳລັບແຜນໃນຕໍ່ໜ້າແມ່ນຈະໄດ້ສືບຕໍ່ລົງເຄື່ອນໄຫວຢູ່ແຂວງ ສະຫວັນນະເຂດ ແລະ ສາລະວັນ ເຊິ່ງຄາດວ່າຈະໄດ້ເຮັດການສຶກສາໃນຕົ້ນເດືອນ ພະຈິກ 2015 ຕາມທິດຊີ້ນຳຂອງຂັ້ນເທິງ.

ອີກວຽກງານໜຶ່ງທີ່ພົ້ນເດັ່ນແມ່ນການປະເມີນຜົນກະທົບໄລຍະທ້າຍໂຄງການ (Endline Survey) ຂອງໂຄງການ ທລຍ ໂດຍທີມງານປະເມີນຜົນຈາກທະນາຄານໂລກ ໄດ້ວ່າຈ້າງບໍລິສັດອິນໂດໄຊນາ (Indochina) ເພື່ອເຮັດໃຫ້ການປະເມີນໃນຄັ້ງນີ້. ການປະເມີນຜົນຄັ້ງນີ້ຖືວ່າມີຄວາມສຳຄັນຫຼາຍເພາະຈະເປັນສິ່ງທີ່ຢັ້ງຢືນເຖິງຜົນໄດ້ຮັບຕົວຈິງຂອງໂຄງການ ທລຍ ໄລຍະທີ 2 ແລະ ເປັນເງື່ອນໄຂອັນສຳຄັນໃຫ້ແກ່ການພິຈາລະນາໂຄງການ ທລຍ ໄລຍະທີ 3. ຄຽງຄູ່ກັບການປະເມີນດັ່ງກ່າວ, ທາງພະແນກຕິດຕາມ-ປະເມີນຜົນ ຍັງໄດ້ເຮັດການປະເມີນຄວາມຍືນຍົງຂອງໂຄງການໄດ້ລົງໄປຕິດຕາມຈຳນວນໂຄງການຍ່ອຍທັງໝົດທີ່ ທລຍ ໄດ້ໃຫ້ການຊ່ວຍແຕ່ປີ 2012 ເປັນຕົ້ນມາ ໄປຄຽງຄູ່ກັບການເຮັດປະເມີນຄວາມເຂົ້າໃຈຂອງພໍ່ປະຊາຊົນຕໍ່ກັບເຄື່ອງມືກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ (ກສກ) ເຊິ່ງຖືວ່າເປັນເຄື່ອງມືສຳຄັນເພື່ອຕິດຕາມຂໍ້ຄິດເຫັນຕ່າງໆຂອງພໍ່ແມ່ປະຊາຊົນຢູ່ຂັ້ນທ້ອງຖິ່ນກ່ຽວກັບວຽກງານ ທລຍ.

ໄດ້ສຳເລັດການກະກຽມເອກະສານຕ່າງໆເພື່ອນຳສະເໜີຕໍ່ກອງປະຊຸມ ເພື່ອການພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກຂອງອາຊຽນ, ລວມທັງບົດສະຫຼຸບຫຍໍ້ຂອງວຽກງານທີ່ພົ້ນເດັ່ນຂອງ ທລຍ ເພື່ອຮັບລາງວັນອາຊຽນ.

ວຽກງານທີ່ຕ້ອງເອົາໃຈໃສ່ໃນເດືອນ ຕຸລາ ແມ່ນກະກຽມແຜນການຈັດຕັ້ງປະຕິບັດວຽກງານ ທລຍ ສົກປີ 2015-2016 ຫລືຮອບວຽນ 13 ກໍຄືຮອບວຽນສຸດທ້າຍຂອງ ທລຍ 2 ວຽກງານທີ່ຕ້ອງເອົາໃຈໃສ່ແມ່ນການຈັດສັນງົບປະມານ ແລະ ຄາດຄະເນຈຳນວນໂຄງການຍ່ອຍຕ່າງໆ ວຽກງານດັ່ງກ່າວຈະໄດ້ດຳເນີນຫລັງຈາກກອງປະຊຸມອາຊຽນ ແລະ ການສະເຫຼີມສະຫຼອງວັນສັບປະດາແຫ່ງການລຶບລ້າງຄວາມທຸກຍາກສາກົນ ວັນທີ 17 ຕຸລາ 2015.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 <u>*ຮອບວຽນ 12 (ສົກປີ 2014-2015)*</u>

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 323 ໂຄງການເທົ່າກັບ 73.7 %, ຄວາມຄືບໜ້າຫລາຍກວ່າ 50% ມີ 67 ໂຄງການ, ໜ້ອຍກວ່າ 50% ມີ 19 ໂຄງການ ສ່ວນທີ່ເຫລືອ 29 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

**ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 48 | 4 | 2 | 5 |
| ສາລະວັນ | 31 | 8 | 17 | 5 | 1 |
| ຊຽງຂວາງ | 42 | 41 | 1 | 0 | 0 |
| ຜົ້ງສາລີ | 25 | 4 | 14 | 4 | 3 |
| ຫລວງນໍ້າທາ | 21 | 16 | 2 | 1 | 2 |
| ຫົວພັນ | 124 | 118 | 6 | 0 | 0 |
| ຫຼວງພະບາງ | 48 | 26 | 9 | 0 | 13 |
| ອຸດົມໄຊ | 50 | 39 | 6 | 2 | 3 |
| ອັດຕະປື | 18 | 15 | 1 | 2 | 0 |
| ເຊກອງ | 20 | 8 | 7 | 3 | 2 |
| **ລວມ** | **438** | **323** | **67** | **19** | **29** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ກັນຍາ 2015*

## 1.2. ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກັນຍາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 328 ໂຄງການ (98.4%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ສຳລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈຳນວນ 5 ໂຄງການ ແລະ ຄາດວ່າຈະສຳເລັດໃນມໍ່ໆ ນີ້. ອີງຕາມຕາຕະລາງຂ້າງລຸ່ມນີ້ ເຫັນວ່າທຸກໂຄງການ ໃນຮອບວຽນດັ່ງກ່າວ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດດັ່ງລາຍລະອຽດຕາມຕາຕະລາງ 2 ແລະ 3.

**ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 45 | 45 | 0 | 0 | 0 |
| ສາລະວັນ | 16 | 16 | 0 | 0 | 0 |
| ຊຽງຂວາງ | 29 | 29 | 0 | 0 | 0 |
| ຜົ້ງສາລີ | 23 | 23 | 0 | 0 | 0 |
| ຫຼວງນໍ້າທາ | 16 | 14 | 2 | 0 | 0 |
| ຫົວພັນ | 69 | 69 | 0 | 0 | 0 |
| ຫຼວງພະບາງ | 43 | 42 | 1 | 0 | 0 |
| ອຸດົມໄຊ | 54 | 54 | 0 | 0 | 0 |
| ອັດຕະປື | 18 | 16 | 2 | 0 | 0 |
| ເຊກອງ | 20 | 20 | 0 | 0 | 0 |
| **ລວມ** | **333** | **328** | **5** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ກັນຍາ 2015*

ຈາກຕາຕະລາງຂ້າງເທິງນີ້ 7 ໂຄງການທີ່ບໍ່ທັນສໍາເລັດ ແລະ ກໍາລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 3 ໂຄງການທີ່ຫລ້າຊ້າໃນຮອບວຽນ 11**

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສໍາພັນ | ຄໍາວົງສາ | 77 |
| 11 | ສ້ອມແປງລະບົບນໍ້າລິນ | ແຂວງ ຫຼວງພະບາງ | ໂພນໄຊ | ກຸ່ມ ບ້ານນໍ້າບໍ່ | ຫ້ວຍມັນ | 70 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູຍາງ | 90 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ນາແລ | ພູຫຼວງ | ພູຫຼວງມີກຈີງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ລອງ | ບອກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ກັນຍາ 2015*

**ຕາຕະລາງ 4. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11 (ແຍກຕາມຂະແໜງການ)**

| ແຂວງ | ຈໍານວນໂຄງການ | ສໍາເລັດ 100% | ສໍາເລັດກວ່າ 50% | ສໍາເລັດບໍ່ຮອດ 50% | ສໍາເລັດ 0% |
|---|---|---|---|---|---|
| ກະສິກໍາ ແລະ ປ່າໄມ້ | 38 | 37 | 1 | 0 | 0 |
| ຄົມມະນາຄົມ | 57 | 55 | 2 | 0 | 0 |
| ສາທາລະນະສຸກ | 23 | 22 | 1 | 0 | 0 |
| ສຶກສາ | 119 | 119 | 0 | 0 | 0 |
| ນໍ້າສະອາດແລະສຸຂະອະນາໄມ | 90 | 89 | 1 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 6 | 6 | 0 | 0 | 0 |
| **ລວມ** | **333** | **328** | **5** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 30 ກັນຍາ 2015*

## 1.3. ຮອບວຽນ 9 ແລະ ຮອບວຽນ 10 (ສົກປີ 2012-2013 ແລະ ສົກປີ 2013-2014)

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈໍານວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າໝາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນໍ້າທາ) ແລະ ນໍາໃຊ້ງົບປະມານທັງໝົດ 61,114,300,917 ກີບ ມີຈໍານວນ 261 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສໍາເລັດ 100 % ແລະ ງົບປະມານທີ່ໄດ້ນໍາໃຊ້ 60,979,645,792 ກີບ ຫລື 99.8 % ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດບາງໂຄງການໃນຮອບວຽນດັ່ງກ່າວແມ່ນມີ 1 ໂຄງການຄື ໂຄງການກໍ່ສ້າງຫໍພັກນັກສຶກສາ ຢູ່ແຂວງ ຫລວງນໍ້າທາ ເມືອງນາເລ ກຸ່ມສະເລື່ອງ ບ້ານດອນທິບ ນັ້ນແມ່ນຖືກຍົກເລີກເນື່ອງຈາກຖືກໂຄງການສ້າງເຂື່ອນໄຟຟ້າດັ່ງນັ້ນ ພວກເຮົາສາມາດສະຫລຸບໄດ້ວ່າ ສໍາຫລັບຮອບວຽນ 9 ແມ່ນຈັດຕັ້ງປະຕິບັດສໍາເລັດແລ້ວ 100%.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດ ຈໍານວນ 79,125,251,302 ກີບ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ ມີຈໍານວນ 392 ໂຄງການທີ່ໄດ້ສໍາເລັດການກໍ່ສ້າງ ແລະ ງົບປະມານຈໍານວນ 78,883,029,606 ກີບ (99.7%) ແມ່ນໄດ້ຖືກໂອນສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສໍາລັບ 1 ໂຄງການທີ່ຍັງບໍ່ສໍາເລັດນັ້ນມີຄວາມຄືບໜ້າໜ້ອຍກວ່າ 50% ຢູ່ແຂວງ ຫຼວງນໍ້າທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນໍາມາຈາກຕ່າງປະເທດ ແລະ ກໍາລັງຢູ່ໃນຂັ້ນຕອນເພື່ອກໍານົດມາຕະຖານເຫລັກຄືນໃໝ່ (ປະເທດຫວຽດນາມ), ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ.

## 2. ງົບປະມານ ແລະ ການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສໍາລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ສິງຫາ 2015 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 60,979,645,792 ກີບ ເທົ່າກັບ 99.8%ຂອງງົບປະມານທັງໝົດ, ຮອບວຽນ 10 ເບີກຈ່າຍໄປແລ້ວ 78,883,029,606 ກີບ ເທົ່າກັບ 99.7% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈໍານວນ 75,451,756,058 ກີບ ຫລື ເທົ່າກັບ 97.4% ຂອງງົບປະມານທັງໝົດ ແລະ ສໍາລັບຮອບວຽນ 12 ງົບປະມານທັງໝົດ 82,889,353,065 ກີບ ເບີກຈ່າຍໄປແລ້ວ 41,340,375,889 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້.

ຕາຕະລາງ 5. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 60,979,645,792 | 134,655,125 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 78,883,029,606 | 242,221,696 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 328 | 75,451,756,058 | 1,996,068,509 |
| ຮອບວຽນ 12 (2014-2015) | 438 | 82,853,963,577[1] | 323 | 41,340,375,889 | 41,513,587,689 |
| ລວມ | **1,426** | **300,541,340,363** | **1,304** | **256,654,807,345** | **43,886,533,019** |
| **ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016)** | | | | | |
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ | ຮອບວຽນ (ສົກປີ) |
| ຮອບວຽນ 13 (ສົກປີ 2015-2016) | 110 | 32,000,000,000 | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | ຮອບວຽນ 13 (ສົກປີ 2015-2016) |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ - ການເງິນ, ທລຍ, 30 ກັນຍາ 2015*

[1] *ງົບປະມານອາດມີການປ່ຽນແປງເນື່ອງຈາກສັນຍາກັບຜູ້ຮັບເຫມົາບາງໂຄງການກໍາລັງດໍາເນີນການຢູ່*

## 3. ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ

- **ວຽກງານພັດທະນາຊຸມຊົນ**

- ສຳເລັດການປັບປຸງການຂຽນໂຄງຮ່າງການຈັດຕັ້ງຕ່າງໆຂອງບ້ານ CDD ທີ່ໄດ້ຮັບໂຄງການຍ່ອຍໃນຮອບວຽນ 12 ສຳລັບ 38 ບ້ານ ຂອງ 5 ເມືອງ ຂອງ 3 ແຂວງ ຄື: ເມືອງໄຊ, ເມືອງນາໝໍ້ (ແຂວງອຸດົມໄຊ), ເມືອງນອງ (ແຂວງ ສະຫວັນນະເຂດ), ເມືອງ ຈອມເພັດ ແລະ ເມືອງນ້ຳບາກ (ແຂວງ ຫລວງພະບາງ).
- ສຳເລັດການຈັດກອງປະຊຸມ ກ່ຽວກັບ ການຈັດຕັ້ງປະຕິບັດໂດຍຊຸມຊົນເອງ (Community Force Account) ຢູ່ສູນວິໃຈພະຍາດ, ນະຄອນຫລວງວຽງຈັນ ລະຫວ່າງວັນທີ 23-25 ກັນຍາ 2015 ມີຜູ້ເຂົ້າຮ່ວມທັງໝົດ 26 ຄົນ, ຍິງ 5 ຄົນ ໂດຍການເປັນຄູຝຶກຂອງທ່ານ ດຣ ກາມີນີ, ຊ່ຽວຊານທີ່ປຶກສາ ດ້ານການພັດທະນາຊຸມຊົນ ຈາກທະນາຄານໂລກ.
- ຊຸກຍູ້ຕິດຕາມແຜນງົບປະມານ ເພື່ອຈັດກອງປະຊຸມທົບທວນແຜນພັດທະນາຂັ້ນບ້ານ, ກຸ່ມບ້ານ ຮອບວຽນ 13 ຈາກ ທລຍ 10 ແຂວງ
- ຊຸກຍູ້ ແລະ ຕິດຕາມການດຳເນີນກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີ ໃນຮອບວຽນ 12 ຂອງເມືອງເປົ້າໝາຍ ທລຍ ແລະ ຕິດຕາມ ການດຳເນີນກອງປະຊຸມແນະນຳໂຄງການທົດລອງ CDD ແລະ LN ຢູ່ 3 ເມືອງເປົ້າໝາຍທົດລອງ ຂອງຮອບວຽນ 13 ຄື: ເມືອງຊຽງຄໍ້ ແລະ ເມືອງຫົວເມືອງ ແຂວງ ຫົວພັນ.
- ລະຫວ່າງວັນທີ 8-10 ກັນຍາ 2015 ໄດ້ລົງໄປສົມທົບກັບແຂວງ ແລະ ເມືອງ ເພື່ອຕິດຕາມວຽກງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ຂອງຄະນະກວດສອບທາງສັງຄົມຂັ້ນບ້ານ ແລະ ການເຄື່ອນໄຫວກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ ຂັ້ນບ້ານ ຢູ່ເມືອງ ເຊໂປນ ແລະ ເມືອງ ນອງ ແຂວງສະຫວັນນະເຂດ ແລະ ເຫັນວ່າ ຕ້ອງໄດ້ສຸມໃສ່ການຈັດຕັ້ງປະຕິບັດໂຕຈິງໃຫ້ລະອຽດຕື່ມ.
- ວັນທີ 7-10 ກັນຍາ 2015 ນຳພາທີມງານສື່ມວນຊົນແຕ່ລະພາກສ່ວນໃນຂັ້ນສູນກາງ ລວມ 6 ພາກສ່ວນລົງເອົາຂ່າວກ່ຽວກັບການຈັດຕັ້ງປະຕິບັດວຽກງານ ທລຍ ໂຕຈິງຢູ່ພາກສະໜາມ ແລະ ເຂົ້າຮ່ວມຊຸດຝຶກອົບຮົມການເປັນຄູຝຶກ ກ່ຽວກັບ ວິທີການທົບທວນແຜນພັດທະນາບ້ານ ແລະ ກຸ່ມບ້ານທີ່ຈັດຕັ້ງປະຕິບັດຢູ່ 5 ເມືອງເປົ້າໝາຍ CDD ໃນຮອບວຽນ 13.
- ເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານເຊິ່ງມີ 9 ຫົວຂໍ້ຂ່າວ; ຄື: ການຝຶກອົບຮົມການຄຸ້ມຄອງນຳໃຊ້ໂຮງຮຽນປະຖົມບ້ານປາກຄານ ເມືອງວຽງພູຄາ, ສຳເລັດກອງປະຊຸມການຈັດຕັ້ງປະຕິບັດໂຄງການຍ່ອຍ 3 ເມືອງ, ມອບຮັບການກໍ່ສາງໂຮງຮຽນປະຖົມ 2 ຫ້ອງ ບ້ານໄຮ່ ເມືອງລອງ, ກອງປະຊຸມສະຫຼຸບງວດ 1 ບ້ານຊຸດດົບ ເມືອງນາແລ, ຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12, ການປົກປັກຮັກສາຄຸ້ມຄອງນຳໃຊ້ໂຄງການຍ່ອຍໃນກຸ່ມບ້ານ, ການມອບຮັບໂຄງການຍ່ອຍນ້ຳລິນ ບ້ານຫວ້ຍຄ້າງ, ນຳພາທີມງານຂັ້ນກຸ່ມບ້ານ ແລະ ຂັ້ນບ້ານອານາໄມກະດານຂ່າວ ກຸ່ມບ້ານ ແລະ ການກໍ່ສ້າງໂຄງການຍາອຍທີ່ຕົກໃສ່ບ້ານທຸກຍາກແມ່ນສາມາດປະຕິບັດໄດ້ 90 %.

- ສຳເລັດການນຳພານັກຂ່າວຈາກ ກົມຂ່າວສານແມ່ຍິງ, ໜັງສືພິມວຽງຈັນທາມ, ໜັງສືພິມປະຊາຊົນ, ໂທລະພາບແຫ່ງຊາດ, ວິທະຍຸແຫ່ງຊາດ ລົງໄປເກັບກຳຂໍ້ມູນຂ່າວ ຢູ່ເມືອງນອງ ແລະ ເມືອງເຊໂປນ ແຂວງ ສະຫັວນນະເຂດ.
- ສຳເລັດການຈັດສຳພາດ ລາຍການຮອບບ້ານຜ່ານເມືອງ, ລາຍການພັດທະນາຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ, ລາຍການ ລຸງສ້າງ-ລຸງສາ ແລະ ກົມຂ່າວສານແມ່ຍິງລາວ ສະຫະພັນແມ່ຍິງລາວ ກ່ຽວກັບ "ຜົນງານການເຄື່ອນໄຫວປະຈຳປີ ແລະ ທິດທາງແຜນການຕໍ່ໜ້າ ເພື່ອຂໍ່ານັບຮັບຕ້ອນວັນຊາດທີ່ 2 ທັນວາ ແລະ ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດອາຊ່ຽນ ແລະ ວັນສັບປະດາສາກົນ ແລະ ວັນລຶບລ້າງ ຄວາມທຸກຍາກແຫ່ງຊາດ.
- ສຳເລັດການອອກແບບເພື່ອຈັດພິມປື້ມຄູ່ມື ຊື່ໂຄງການຍ່ອຍ ແລະ ຊື່ກຸ່ມບ້ານ ທີ່ເປັນພາສາລາວ ແລະ ພາສາ ອັງກິດ ແລະ ພິມເສື້ອ ແລະ ຖົງພາຍ ເພື່ອຮັບໃຊ້ ກອງປະຊຸມລັດຖະມົນຕີພັດທະ ນາຊົນນະບົດ ແລະ ລຶບລ້າງ ຄວາມທຸກຍາກ ອາຊຽນຄັ້ງທີ 9 ພ້ອມທັງກະກຽມວາງສະແດງ ແລະ ສົມທົບກັບ ຄພທສ ໃນການສ້າງຄູ່ມືຮັບ ໃຊ້ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ອາຊຽນ ຄັ້ງທີ 9 ໃນລະຫວ່າງ ວັນທີ 13-17 ຕຸລາ 2015 ທີ່ຫໍວັດທະນະທຳແຫ່ງຊາດ ສຳເລັດ 50%.

- **<u>ວຽກງານວິສະວະກຳ ແລະ ວິຊາການ</u>**
- ອອກແບບການປະດັບປະດາລົດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2 ແລະ ສືບຕໍ່ລົງຕິດຕາມໂຄງການ ຍ່ອຍ ຮອບວຽນທີ 11, 12
- ສືບຕໍ່ເຮັດວຽກຮ່ວມກັບ ILO ແລະ ກະກຽມຫລັກສູດຝຶກການຝຶກອົບຮົມ Water CAD ໃຫ້ວິຊາ ການຂັ້ນເມືອງ ພ້ອມທັງສຳເລັດການເກັບກຳຈຳນວນບ້ານ ເພື່ອກະກຽມຈັດຕັ້ງປະຕິບັດໂຄງການຮ່ວມ ມືກັບອົງການນໍ້າ ແລະ ສຸກຂະອະນາໄມ ແລະ ນໍ້າສະອາດ.
- ສືບຕໍ່ສັງລວມຂໍ້ມູນທີ່ຕັ້ງໂຄງການຍ່ອຍ ຮອບວຽນທີ 9-12.
- ຈັດກອງປະຊຸມກ່ຽວກັບການແນະນຳ ການກໍ່ສ້າງຂົວຢູ່ເມືອງຈອມເພັດ, ແຂວງ ຫລວງພະບາງ.
- ກອງປະຊຸມແລກປ່ຽນບົດຮຽນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານສຸຂະອະນາໄມ ເຂດຊົນນະບົດໃນ ສປປ ລາວ 29-30 ກັນຍາ 2015 ທີ່ແຂວງຈຳປາສັກ.
- ກອງປະຊຸມເປີດໂຕໂຄງການ ກ່ຽວກັບຊຸມຊົນເປັນເຈົ້າດ້ານສຸຂະອານາໄມ ຢູ່ 4 ແຂວງພາກໃຕ້ຄື ແຂວງ ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ແຂວງ ອັດຕະປື.

- **<u>ວຽກງານຕິດຕາມ-ປະເມີນຜົນ</u>**
- ໄດ້ສຳເລັດກອງປະຊຸມທົບທວນຄືນ ແລະ ສ້າງຄວາມເຂັ້ມແຂງ ໃຫ້ວິຊາການທີ່ຮັບຜິດຊອບວຽກງານຕິດຕາມ-ປະເມີນຜົນຂອງກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ທີ່ໄດ້ຈັດຂຶ້ນທີ່ນະຄອນຫລວງວຽງຈັນ ໃນລະຫວ່າງວັນທີ 7-11ກັນຍາ 2015 ທີ່ນະຄອນຫຼວງວຽງຈັນ, ໂດຍການເຂົ້າຮ່ວມຂອງພະນັກງານວິຊາ ການຕິດຕາມ-ປະເມີນຜົນຂັ້ນເມືອງ (ເມືອງ CDD), ຂັ້ນແຂວງ, ຜູ້ປະສານງານຂັ້ນແຂວງຈາກ 10 ແຂວງ,

ວິຊາການຈາກພະແນກຕ່າງໆຂອງ ທລຍ ຂັ້ນສູນກາງ ແລະ ແຂກຮັບເຊີນຈາກພາກລັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ລວມທັງຕົວແທນຈາກຜູ້ໃຫ້ທຶນ ທັງໝົດ 51 ທ່ານ, ຍິງ 9 ທ່ານ ເພື່ອແລກປ່ຽນບົດຮຽນຜົນໄດ້ຮັບ, ສິ່ງທ້າທາຍ ແລະ ວິທີທາງແກ້ໄຂ ໃນການປະຕິບັດວຽກງານຕົວຈິງກັບພະແນກຕ່າງໆພາຍໃນ ທລຍ, ພາກລັດ, ອົງການຈັດຕັ້ງ ແລະ ໂຄງການຕ່າງໆ ໂດຍສະເພາະແມ່ນວຽກງານ ຕິດຕາມ-ປະເມີນຜົນ.

- ໄດ້ມີການຕິດຕາມກວດກາ ທຸກໂຄງການທີ່ໄດ້ມີການຈັດຕັ້ງປະຕິບັດໄລຍະຜ່ານມາໂດຍສະເພາະບັນດາໂຄງການທີ່ມີຄວາມຫລ້າຊ້າເພື່ອຫາທາງອອກ ທີ່ເໝາະສົມໃຫ້ໂຄງການດັ່ງກ່າວໄດ້ຈັດຕັ້ງປະຕິບັດສຳເລັດ ແລະ ອຳນວຍຄວາມສະດວກໃຫ້ແກ່ຊຸມຊົນ.
- ເພື່ອຮັບປະກັນຄວາມຫລາກຫລາຍຂອງຂໍ້ມູນແມ່ນໄດ້ມີການປັບປຸງຂໍ້ມູນໃຫ້ແທດເໝາະກັບສະພາຕົວຈິງທີ່ຕອບສະໜອງກັບໂຕຊີ້ວັດຂອງໂຄງການ.
- ພັດທະນາໂປແກມລະບົບຖານຂໍ້ມູນຂອງ ທລຍ ເພື່ອເກັບກຳຂໍ້ມູນຂະບວນການຈັດຕັ້ງປະຕິບັດວຽກງານຂອງ ທລຍ ເພື່ອເປັນເຄື່ອງມືໃນການ ຕິດຕາມ ແລະ ປະເມີນຜົນຂອງ ທລຍ.
- ເຂົ້າຮ່ວມ ກອງປະຊຸມແລກປ່ຽນບົດຮຽນ ວຽກງານສຸຂະອະນາໄມເຂດຊົນນະບົດ ຂອງ ສປປ ລາວ ທີ່ແຂວງຈຳປາສັກ, ມີຜູ້ເຂົ້າຮ່ວມ 143 ຄົນ ຄື: ຈາກຄູ່ຮ່ວມພັດທະນາ 52 ທ່ານ ຈາກການຈັດຕັ້ງແຂວງ 70 ທ່ານ ແລະ ຈາກ ການຈັດຕັ້ງສູນກາງ 21 ທ່ານ.
- ວຽກງານສຳຄັນແມ່ນການສັງລວມຜົນໄດ້ຮັບຂອງ ທລຍ ໃນສົກປີ 2014-2015 ເພື່ອປະກອບເຂົ້າໃນບົດລາຍງານປະຈຳປີ ທັງພາສາລາວ ແລະ ພາສາອັງກິດ ທັງນີ້ກໍເພື່ອຕີລາຄາຜົນໄດ້ຮັບທຽບໃສ່ບັນດາຕົວຊີ້ວັດຂອງໂຄງການ.

- <u>ວຽກງານບໍລິຫານ - ການເງິນ ແລະ ຈັດຕັ້ງ</u>

- ສຳເລັດບົດສະຫຼຸບດ້ານການເງິນປະຈຳເດືອນ ສິງຫາ 2015 ແລະ ສຳເລັດຄ່ຽນເງິນກັບຄັງເງິນປະຈຳເດືອນ ສິງຫາ 2015 ປະມານ 217,000 ໂດລາ.
- ສຳເລັດຄ່ຽນເງິນ 772,000 ສຳລັບໂຄງການຍ່ອຍຮອບວຽນ 12 ຂອງ ແຂວງ ອຸດົມໄຊ.
- ຕິດຕາມການເບີກຈ່າຍໂຄງການຍ່ອຍຮອບວຽນ 12 ສຳລັບງວດ 1 ແລ້ວ 98%.
- ອະນຸມັດໂອນງົບປະມານກອງປະຊຸມທົບທວນແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານໃນ 10 ແຂວງ.
- ສຳເລັດການຝຶກອົບຮົມການຂື້ນແຜນງົບປະມານປະຈຳສົກປີ 2015-2016 ໃກ້ແກ່ຂັ້ນສູນກາງ, ແຂວງ ແລະ ເມືອງ.
- ສັງລວມຮ່າງແຜນງົບປະມານປະຈຳປີຂອງສົກປີ 2015-2016 ຈາກຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອສົ່ງໃຫ້ແຕ່ລະໜ່ວຍງານຢູ່ຂັ້ນສູນກາງກວດກາ ເພື່ອສັງລວມຕົວເລກງົບປະມານທີ່ແນ່ນອນ.
- ເຈລະຈາດ້ານສັນຍາກັບຜູ້ສະໝັກທີ່ໄດ້ອັນດັບທີ 1. ປະເມີນ ແລະ ຄັດເລືອກພະນັກງານ ຮັບຜິດຊອບກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ຄໍ້າປະກັນດ້ານໂພຊະນາການ: ມາຮອດປະຈຸບັນວຽກດັ່ງກ່າວໄດ້ສຳເລັດແລ້ວ 80%, ພະນັກງານວິຊາການຂັ້ນເມືອງ ແລະ ນັກສຶກສາຂັ້ນບ້ານໄດ້ຮັບການບັນຈຸເປັນທີ່ຮຽບຮ້ອຍຢູ່ໃນ 7 ເມືອງ (ຮ້ຽມ, ຊ່ອນ, ຫົວເມືອງ, ຊຽງຄໍ້, ເຊໂປນ, ນອງ, ທ່າປາງທອງ) ຂອງແຂວງຫົວພັນ ແລະ ສະຫວັນນະ

ເຂດ. ຍັງຂາດພະນັກງານຜູ້ປະສານງານຂັ້ນເມືອງ, ຫົວໜ້າຢູ່ຂັ້ນສູນກາງ, ປະສານງານດ້ານປັບປຸງຊີວິດການ ເປັນຢູ່ຂັ້ນສູນກາງ.

- ປະເມີນ ແລະ ຄັດເລືອກຜູ້ຊ່ວຍບັນຊີ ປະຈໍາຫ້ອງການ ທລຍ ສູນກາງ: ພາຍຫລັງມື້ປິດຮັບສະໝັກ 07 ກັນຍາ 2015, ໄດ້ແຈ້ງໃຫ້ຜູ້ສະໝັກທຸກຄົນເຂົ້າມາທົດສອບຄວາມຮູ້ດ້ານບັນຊີ ແຕ່ຜົນຈາກການທົດສອບໃນຄັ້ງວັນທີ 24 ກັນຍາ 2015 ເຫັນວ່າ ຍັງບໍ່ທັນມີຜູ້ສະໝັກ ທີ່ເໝາະສົມກັບຕໍາແໜ່ງດັ່ງກ່າວ. ດັ່ງນັ້ນ, ຈຶ່ງຈໍາເປັນຕ້ອງປະກາດໃໝ່ເປັນຄັ້ງທີ 2, ມື້ປິດຮັບສະໝັກແມ່ນວັນທີ 12 ຕຸລາ 2015.
- ປະເມີນ ແລະ ຄັດເລືອກພະນັກງານກວດສອບພາຍໃນດ້ານວຽກງານວິສະວະກໍາປະຈໍາ ທລຍ ສູນກາງ: ໄດ້ຜ່ານຂະບວນການທົດສອບຜູ້ສະໝັກທັງ 3 ຄົນ, ປະຈຸບັນກໍາລັງຢູ່ໃນຂັ້ນຕອນການ
- ປະເມີນຜົນງານການເຮັດວຽກຂອງພະນັກງານ (ຫົວໜ້າໜ່ວຍງານກວດສອບພາຍໃນ, ຜູ້ຊ່ວຍກວດສອບພາຍໃນ, ຊ່ຽວຊານທີ່ປຶກສາຕ່າງປະເທດ) ເພື່ອສະເໜີຂໍອະນຸມັດຕໍ່ສັນຍາເປັນປີ ຈາກຜູ້ໃຫ້ທຶນ: ໄດ້ຮັບການອະນຸມັດຕໍ່ສັນຍາໄລຍະ 1 ປີ ໃຫ້ພະນັກງານທັງ 2 ຕໍາແໜ່ງແລ້ວ.
- ປະເມີນຜົນງານການເຮັດວຽກຂອງຜູ້ປະສານງານ ທລຍ ແຂວງສາລະວັນ ເພື່ອກະກຽມຕໍ່ສັນຍາເປັນປີ: ກໍາລັງຢູ່ຂັ້ນຕອນການເກັບກໍາ ແລະ ຮວບຮວມຄໍາຄິດເຫັນຈາກບັນຫາຫົວໜ້າພະແນກ ແລະ ຫົວໜ້າໜ່ວຍງານພາຍໃນ ທລຍ ສູນກາງ.
- ສືບຕໍ່ປະສານງານກັບຊ່ຽວຊານຕ່າງປະເທດ ກ່ຽວກັບການສ້າງປື້ມຄູ່ມືວຽກງານຈັດຕັ້ງ-ພະນັກງານ ແລະ ການປັບປຸງນະໂຍບາຍທີ່ກ່ຽວພັນ: ມາຮອດປະຈຸບັນ ຊ່ຽວຊານຕ່າງປະເທດໄດ້ປັບປຸງຄູ່ມືດັ່ງກ່າວເປັນສະບັບທີ 2 ແລ້ວ ແລະ ຄາດວ່າຈະໄດ້ສະບັບທີ່ສົມບູນ ໃນເດືອນພະຈິກ 2015.
- ກະກຽມການເຂົ້າຮ່ວມຮັບໃຊ້ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກອາຊຽນ ຄັ້ງທີ 9 ແລະ ກອງປະຊຸມທີ່ກ່ຽວຂ້ອງ ໃນໄລຍະວັນທີ 12-18 ຕຸລາ 2015: ໄດ້ເຂົ້າຮ່ວມປະຊຸມ ແລະ ຝຶກອົບຮົມກ່ຽວກັບການຮັບໃຊ້ກອງປະຊຸມດັ່ງກ່າວ ຕາມການແຈ້ງເຊີນ ທີ່ຂັ້ນເທິງຈັດຂຶ້ນໃນແຕ່ລະຄັ້ງ.

## 4. ແຜນວຽກສໍາລັບເດືອນ ຕຸລາ 2015

- **ວຽກງານພັດທະນາຊຸມຊົນ**

- ຈັດກອງປະຊຸມທົບທວນຄືນການວາງແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຮອບວຽນ 13 (ສົກ 2015-2016) ຢູ່ ທລຍ 10 ແຂວງ ແລະ ຈັດກອງປະຊຸມຝຶກອົບຮົມການຈັດຕັ້ງປະຕິບັດໂດຍຊຸມຊົນເອງ (Community Force Account) ໃຫ້ພະນັກ ງານຂັ້ນເມືອງ ແລະ ແຂວງ ຂອງເມືອງ CDD ຢູ່ແຂວງຫລວງພະບາງລະຫວ່າງວັນທີ 19-23 ຕຸລາ 2015.
- ຈັດກອງປະຊຸມຝຶກອົບຮົມວິທີການວາງແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານໃຫ້ 3 ເມືອງ CDD ເປີດໃໝ່ ເມືອງຊຽງຄໍ້, ຫົວເມືອງ ແລະ ເມືອງ ນອງ, ພ້ອມທັງແນະນໍາການຈັດຕັ້ງປະຕິບັດໂຄງການ LN ເຊີ່ງຈະຈັດຂຶ້ນຢູ່ເມືອງວັງວຽງ ລະຫວ່າງວັນທີ 5-9 ຕຸລາ 2015
- ວັນທີ 5-9 ຕຸລາ 2015 ຈະຈັດຊຸດຝຶກອົບຮົມການເປັນຄູຝຶກ ກ່ຽວກັບ ການຈັດຕັ້ງປະຕິບັດ ຂັ້ນຕອນການວາງແຜນ ໃນຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ ສໍາລັບ ພະນັກງານ 3 ເມືອງເປົ້າໝ

າຍໃໝ່ ທີ່ຈະຈັດຕັ້ງປະຕິບັດ CDD+LN. ມີເປົ້າໝາຍຜູ້ເຂົ້າຮ່ວມທັງໝົດ 45 ທ່ານ ແລະ ສືບຕໍ່ຊຸກຍູ້ ແລະ ຕິດຕາມ ການຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີຂັ້ນແຂວງ ໃນຮອບວຽນ 13 ຢູ່ແຂວງເປົ້າໝາຍ ທລຍ.

- ຕິດຕາມ ແລະ ສັງລວມ ຂໍ້ມູນ ຜົນກະທົບ ທາງສັງຄົມ ໃນໄລຍະ ກາງ ແລະ ໄລຍະ ທ້າຍຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ພ້ອມອທັງກະກຽມແຜນຈັດຕັ້ງປະຕິບັດກິດຈະກຳ ສະເຫລີມສະຫລອງ ວັນຍຸດຕິທຸກຄວາມຮຸນແຮງ ທີ່ມີຕໍ່ແມ່ຍິງ ແລະ ເດັກນ້ອຍ ວັນທີ 25 ພະຈິກ ຂອງທຸກໆ ປີ.
- ສືບຕໍ່ຂຽນຂ່າວໃຫ້ສື່ມວນຊົນ ໃນລາຍການໂທລະພາບ, ວິທະຍຸ, ໜັງສືພິມສະຫະພັນແມ່ຍິງລາວ ແລະ ໂທລະພາບແຫ່ງຊາດ, ວິທະຍຸແຫ່ງຊາດ ເພື່ອກະຈາຍອອກສູ່ສາທາລະນະ ໃຫ້ໄດ້ ຢ່າງໜ້ອຍ 5 ບົດ.
- ຈັດພິມເຄື່ອງມື IEC ກ່ຽວກັບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບຈຳນວນ 140 ຊຸດ ເພື່ອແຈກຢາຍໃຫ້ເມືອງ ແລະ ກຸ່ມບ້ານ.
- ຈັດພິມປື້ມແຜນທີ່ ແລະ ປື້ມຄູ່ມືຖານຂໍ້ມູນ ວຽກງານຕິດຕາມປະເມີນຜົນ ຈຳນວນ 736 ຫົວ ແລະ ຜະລິດກະເປົາ ທລຍ ຈຳນວນ 1,000 ໜ່ວຍ, ເສື້ອ ທລຍ ຈຳນວນ 1,000 ໂຕ ພ້ອມທັງວາງສະແດງຮັບໃຊ້ກອງປະຊຸມລັດຖະມົນຕີຫລຸດຜ່ອນຄວາມທຸກຍາກ ອາຊ່ຽນຄັ້ງທີ່ 9 ທີ່ຫໍວັດທະນາທຳ ແຫ່ງຊາດ ແລະ ໂຮງແຮມລາວພະລາຊາ.
- ເຮັດບົດລາຍງານຜົນສຳເລັດຂອງການຈັດຕັ້ງປະຕິບັດວຍກງານ IEC ປະຈຳປີ 2014-2015 ແລະ ສ້າງແຜນເຄື່ອນໄຫວວຽກງານສົກປີ 2015-2016.

- <u>ວຽກງານວິສະວະກຳ</u>

- ລໍຖ້າຄຳຕອບຈາກຂັ້ນເທິງກ່ຽວກັບການປະດັບປະດາລຶດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2 ແລະ ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ GOL ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ILO (ລົງຕິດຕາມການຈັດຕັ້ງປະຕິບັດໂຄງການ ILO).
- ສືບຕໍ່ກະກຽມສຳຫລວດໂຄງການຍ່ອຍ IDA ຮອບວຽນທີ 13.
- ກະກຽມຈັດກອງປະຊຸມເປີດໂຕໂຄງການ ແລະ ຝຶກອົບຮົມກະຕຸກຊຸກຍູ້ ຢູ່ຂັ້ນເມືອງ ກ່ຽວກັບໂຄງການຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ແລະ ສືບຕໍ່ສັງລວມຂໍ້ມູນທີ່ຕັ້ງໂຄງການຍ່ອຍ ຮອບວຽນທີ 9-12 ພ້ອມທັງກະກຽມຝຶກອົບຮົມພື້ນຖານການນຳໃຊ້ໂປຣແກຣມ GIS ແລະ ກະກຽມສ້າງຫລັກສູດການນຳໃຊ້ 3D.

- **<u>ວຽກງານຕິດຕາມ-ປະເມີນຜົນ</u>**

- ແມ່ນການເລີ່ມຕົ້ນໄຕມາດທໍາອິດຂອງສົກປີ 2015-2016 ແມ່ນຈະໄດ້ມີການກະກຽມຄວາມພ້ອມຕ່າງໆເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີປະສິດທິຜົນກວ່າເກົ່າເປັນຕົ້ນແມ່ນການສືບຕໍ່ຕິດຕາມ ແລະ ເຮັດປະເມີນຜົນໄດ້ຮັບຂອງການຈັດຕັ້ງປະຕິບັດວຽກ ທລຍ ລວທທັງການຖອດຖອນບົດຮຽນການຜັນຂະຫຍາຍວຽກງານສາມສ້າງ ຂອງລັດຖະບານແຫ່ງ ສປປ ລາວ.
- ປະກອບສ່ວນເຂົ້າໃນກອງປະຊຸມລັດຖະມົນຕີ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ອາຊຽນຄັ້ງທີ 9 ແລະ ວັນສັບປະດາແຫ່ງການລຶບລ້າງຄວາມທຸກຍາກແຫ່ງຊາດ.
- ສືບຕໍ່ຕິດຕາມບັນດາໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດສໍາລັບຮອບວຽນ 12 ສົກປີ 2014-2015 ທີ່ເປັນທຶນຊ່ວຍເຫລືອຂອງຕ່າງປະເທດ ເພື່ອຕິດຕາມບັນດາໂຄງການທີ່ມີຄວາມລ້າຊ້າ ແລະ ຫາວິທີໃນການແກ້ໄຂ.
- ກະກຽມບົດລາຍງານປະຈໍາປີ ພາສາລາວ ແລະ ພາສາອັງກິດ ເພື່ອລາຍງານຜົນໄດ້ຮັບຂອງໂຄງການຕະຫລອດໄລຍະເວລານຶ່ງປີຜ່ານມາ ແລະ ວາງແຜນເພື່ອການຈັດຕັ້ງປະຕິບັດໃນໄລຍະຕໍ່ໄປ.

- **<u>ວຽກງານບໍລິຫານ-ການເງິນ ແລະ ຈັດຕັ້ງ</u>**

- ກະກຽມບົດສະຫຼຸບດ້ານການເງິນປະຈໍາປີ 2015 ແລະ ຕິດຕາມຂໍຄ່ຽນເງິນໂຄງການຍ່ອຍຮ່ວງລັດຖະບານ.
- ກະກຽມວຽກງານກວດສອບຈາກພາຍນອກທີ່ຈະໄດ້ເລີ່ມວັນທີ 16-20 ພະຈິກ 2015.
- ສັງລວມແຜນງົບປະມານປະຈໍາປີ ຂອງສົກ 2015-2016 ຈາກຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ.
- ກະກຽມຄູ່ມືຝຶກອົບຮົມວຽກງານບໍລິຫານການເງິນ ສໍາລັບກຸ່ມບ້ານທົດລອງ 5 ເມືອງໃໝ່ທີ່ຈະເລີ່ມໃນ ເດືອນຕຸລາ 2015.
- ກະກຽມເບີກຈ່າຍໂຄງການຍ່ອຍຮ່ວງລັດຖະບານ ແຂວງ ຫົວພັນ 11 ໂຄງການ.
- ກະກຽມປະເມີນຜົນງານການຈັດຕັ້ງປະຕິບັດວຽກຂອງຊ່ຽວຊານທີ່ປຶກສາອາວຸໂສ (ທ່ານ ຈູລຽນ ໂຣສຊາດ) ເພື່ອຂໍສະເໜີຕໍ່ສັນຍາເຮັດວຽກເປັນລາຍປີ.
- ປະສານງານກັບຄະນະຮັບຜິດຊອບໂຄງການ ເພື່ອປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຊ່ຽວຊານຕ່າງປະເທດ ດ້ານວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ ເພື່ອສະເໜີຂໍຕໍ່ສັນຍາ.
- ດໍາເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນສູນກາງ:
    - ຫົວໜ້າຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ
    - ພະນັກງານຕິດຕາມ-ປະເມີນຜົນດ້ານວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ
    - ຜູ້ຊ່ວຍດ້ານບັນຊີ
- ດໍາເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນແຂວງ:
    - ພະນັກງານຂັບລົດ ປະຈໍາແຂວງຜົ້ງສາລີ
- ດໍາເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນເມືອງ:

- ປະສານງານຂັ້ນເມືອງ ປະຈຳເມືອງ ສະເພາະເມືອງທີ່ຈັດຕັ້ງປະຕິບັດວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ

- ສືບຕໍ່ປະສານງານກັບຊ່ຽວຊານຕ່າງປະເທດ ກ່ຽວກັບການສ້າງປື້ມຄູ່ມືວຽກງານຈັດຕັ້ງ-ພະນັກງານ.

| | | |
|---|---|---|
| ເຊັນແທນ, <u>ຜູ້ອຳນວຍການບໍລິຫານ ທລຍ</u> | <u>ຫົວໜ້າພະແນກ ຕິດຕາມປະເມີນຜົນ</u> | <u>ສັງລວມ ແລະ ລາຍງານ</u> |
| ຕ.ພ.ທ.ສ ຜູ້ອຳນວຍການ ບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ | | |
| ---------------------- | ---------------------- | ---------------------- |
| ບົວລີ ໄຊຍະວົງ<br>Boualy SAYAVONG | ທັດທະຈັນ ພົມພັນທະວົງ | ສິດທິເດດ ກົງວົງສາ |